**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ກອງບັນຊາການທະຫານ ນະຄອນຫຼວງ

ຫ້ອງການ

ເລກທີ 169 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 MAY 2026

# ແຈ້ງເຊີນປະມູນ

**ເຖິງ: ບັນດາບໍລິສັດ ກໍ່ສ້າງ-ສ້ອມແປງເຄຫະສະຖານ**

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019
- ອີງຕາມ ແຜນການລົງທຶນຂອງລັດປະຈຳປີ 2026 ສະບັບເລກທີ: 119 /ກງ.ນວ, ວັນທີ 03 ເມສາ 2026 ໂຄງການກໍ່ສ້າງເຮືອນນອນອ້າຍນ້ອງກອງພັນ 513 ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ

ຫ້ອງການ ກອງບັນຊາການທະຫານນະຄອນຫຼວງວຽງຈັນ, ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ກໍ່ສ້າງ-ສ້ອມແປງເຄຫະສະຖານ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໂຄງການກໍ່ສ້າງ ເຮືອນນອນອ້າຍນ້ອງກອງພັນ 513 ສະຖານທີ່ກໍ່ສ້າງ ຕັ້ງຢູ່ບ້ານນາທ່ອນ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ລະອຽດດັ່ງນີ້:

1. ຜູ້ປະມູນຕ້ອງມີເອກະສານ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດດ້ານການກໍ່ສ້າງເຄຫາສະຖານ, ໃບມອບພັນທະອາກອນປະຈຳປີ 2025 ທີ່ຖືກຕ້ອງຕາມກົດໝາຍ
2. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ພະແນກກໍ່ສ້າງ-ຄຸ້ມຄອງຊັບສິນ ຫ້ອງພະລາທິການ ທະຫານນະຄອນຫຼວງວຽງຈັນ ໂທລະສັບ 020 54945613, 020 77932219 ແລະ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນ ນວ ໂທລະສັບ 020 99992155 ໃນໂມງລັດຖະການ, ເລີ່ມຂາຍຊອງປະມູນແຕ່ວັນທີ 20 ພຶສະພາ 2026 ຫາ 23 ມິຖຸນາ 2026, ໃນລາຄາ 2.000.000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ
3. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 23 ມິຖຸນາ 2026 ທີ່ຫ້ອງປະຊຸມຊັ້ນ 1 ຕຶກ 3 ຊັ້ນ ກອງບັນຊາການທະຫານນະຄອນຫຼວງ (ບ້ານໜອງແຕ່ງເໜືອ) ຊອງປະມູນໃດສົ່ງຊ້າເກີນເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້(ທະຫານນະຄອນຫຼວງ) ແລະ ພະແນກການທີ່ກ່ຽວຂ້ອງຂອງນະຄອນຫຼວງວຽງຈັນ, ຕົວແທນຫຼືບໍລິສັດຜູ້ເຂົ້າຮ່ວມປະມູນ
4. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄ້ຳປະກັນຈາກທະນາຄານ

**ຫົວໜ້າຫ້ອງການ**

ຫ້ອງການ

ສົມເພັດ ສຸລິວົງ